ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ　　　　　　　　　　　　　　　　　ເລກທີ 16 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 27.08.2008

# ຄຳສັ່ງ

## ຂອງນາຍົກລັດຖະມົນຕີ

## ກ່ຽວກັບການກວດກາ ແລະ ຄຸ້ມຄອງການສຳຫລວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳຕົກຂ້ອນ

ເຖິງ: ທ່ານລັດຖະມົນຕີວ່າການ ກະຊວງພະລັງງານ ແລະ ບໍ່ແຮ່,
ບັນດາທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ,
ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເຈົ້າແຂວງໃນທົ່ວປະເທດ.

ມາເຖິງປະຈຸບັນ, ຢູ່ຫລາຍທ້ອງຖິ່ນ ໄດ້ມີການຂຸດຄົ້ນຄຳຕົກຂ້ອນຢູ່ຕາມລຳນ້ຳ ແລະ ເທິງບົກ ໂດຍໄດ້ຮັບອະນຸຍາດ ຫລື ບໍ່ໄດ້ຮັບອະນຸຍາດ ແລະ ມີການເຮັດບໍ່ຖືກຕ້ອງສອດຄ່ອງຕາມລະບຽບເຕັກ ນິກວິຊາການ ແລະ ກົດໝາຍວ່າດ້ວຍບໍ່ແຮ່ ອັນໄດ້ສົ່ງຜົນກະທົບໃນທາງລົບຢ່າງໜັກໜ່ວງ ຕໍ່ສິ່ງແວດ ລ້ອມ ແລະ ສັງຄົມ ທັງເປັນການທຳລາຍແຫລ່ງຊັບພະຍາກອນທຳມະຊາດຂອງປະເທດ.

- ເພື່ອຮັບປະກັນການຂຸດຄົ້ນຊັບພະຍາກອນທຳມະຊາດຢ່າງຖືກຕ້ອງຕາມລະບຽບການ ແລະ ເຕັກນິກວິຊາການ ແລະ ເພື່ອປົກປັກຮັກສາສິ່ງແວດລ້ອມໃຫ້ຍືນຍົງ;

- ອີງຕາມກົດໝາຍວ່າດ້ວຍບໍ່ແຮ່ ສະບັບເລກທີ 04/97/ສພຊ, ລົງວັນທີ 12 ເມສາ 1997;

## ນາຍົກລັດຖະມົນຕີອອກຄຳສັ່ງ ດັ່ງນີ້ :

1. ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ສົມທົບກັບກະຊວງ, ອົງການທີ່ກ່ຽວຂ້ອງຂອງສູນກາງ ແລະ ທ້ອງຖິ່ນ ດຳເນີນການກວດກາການຂຸດຄົ້ນຄຳຕົກຂ້ອນຢູ່ທ້ອງຖິ່ນຕ່າງໆ; ຖ້າພົບເຫັນຢູ່ທ້ອງຖິ່ນໃດ ມີການຂຸດຄົ້ນຄຳຕົກຂ້ອນທີ່ບໍ່ໄດ້ຮັບອະນຸຍາດ ຫລື ໄດ້ຮັບອະນຸຍາດ ແຕ່ຫາກດຳເນີນກິດຈະການບໍ່ ຖືກຕ້ອງຕາມລະບຽບເຕັກນິກ-ວິຊາການ ແລະ ລະບຽບກົດໝາຍ ແມ່ນໃຫ້ຢຸດເຊົາທັນທີ ແລະ ໃຫ້ມີ ການປັບປຸງດ້ານເຕັກນິກການສຳຫລວດ ແລະ ການຂຸດຄົ້ນຄືນໃໝ່ ພ້ອມທັງຮັບປະກັນບໍ່ໃຫ້ມີຜົນກະ ທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ; ພາຍຫລັງໄດ້ມີການປັບປຸງຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຈຶ່ງພິຈາລະນາ ກ່ຽວກັບການດຳເນີນກິດຈະການຄືນໃໝ່ ຕາມຄວາມເໝາະສົມ.

2. ການຂຸດຄົ້ນ, ສຳຫລວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳຕົກຂ້ອນ ແມ່ນອະນຸຍາດໃຫ້ດຳເນີນສະເພາະແຕ່ ແຮ່ຄຳຕົກຂ້ອນຢູ່ເທິງບົກ ຫລື ຢູ່ຕາມລານແຄມນ້ຳເທົ່ານັ້ນ; ຫ້າມບໍ່ໃຫ້ຂຸດຄົ້ນ, ສຳຫລວດ ແລະ ຂຸດຄົ້ນແຮ່ຄຳຕົກຂ້ອນຢູ່ຕາມລຳຫ້ວຍນ້ຳ ຫລື ລຳນ້ຳຕ່າງໆ.

3. ຫລັງຈາກໄດ້ຮັບອະນຸຍາດໃຫ້ຂຸດຄົ້ນ ແລະ ສຳຫລວດແຮ່ຄຳຕົກຂ້ອນແລ້ວ, ຜູ້ດຳເນີນກິດຈະການ ຕ້ອງສ້າງບົດລາຍງານທາງດ້ານທໍລະນີສາດ ຕີລາຄາປະລິມານສະສົມ ແລະ ຄຸນນະພາບຂອງແຮ່ຄຳຕົກຂ້ອນ; ຕ້ອງສ້າງແຜນການຂຸດຄົ້ນ, ບົດວິພາກເສດຖະກິດ-ເຕັກນິກ ແລະ ຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ເພື່ອສະເໜີໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ຮັບຮອງເອົາ.

4. ກະຊວງພະລັງງານ ແລະ ບໍ່ແຮ່ ມີໜ້າທີ່ຄົ້ນຄວ້າພິຈາລະນາການອອກອະນຸຍາດຂຸດຄົ້ນ, ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳຕົກຂ້ອນ. ສຳລັບພື້ນທີ່ງນອນຢູ່ໃນ 3 ປະເພດປ່າໄມ້ ຄື: ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ຕ້ອງໄດ້ຮັບການຢັ້ງຢືນ ແລະ ເຫັນດີຈາກຂະແໜງກະສິກຳ ແລະ ປ່າໄມ້ສາກ່ອນ. ພາຍຫລັງກະຊວງພະລັງງານ ແລະ ບໍ່ແຮ່ອອກອະນຸຍາດແລ້ວ, ແມ່ນມອບໝາຍໃຫ້ທ້ອງຖິ່ນກ່ຽວຂ້ອງເປັນຜູ້ຕິດຕາມ, ກວດກາ ແລະ ຄຸ້ມຄອງກິດຈະການ ໂດຍມີການສົມທົບທາງດ້ານວິຊາການ ກັບກະຊວງ ແລະ ອົງການທີ່ກ່ຽວຂ້ອງ.

5. ການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳຕົກຂ້ອນ ຕ້ອງປະຕິບັດຢ່າງຖືກຕ້ອງຕາມຫລັກການທາງດ້ານເຕັກນິກ-ວິຊາການ ແລະ ບໍ່ອະນຸຍາດໃຫ້ນຳໃຊ້ສານເຄມີໃນການຂຸດຄົ້ນ-ປຸງແຕ່ງແຮ່ຄຳຕົກຂ້ອນທີ່ຈະມີຜົນກະທົບຕໍ່ສິ່ງແວດລ້ອມ.

6. ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ສ້າງ, ປັບປຸງ ແລະ ປະກາດໃຊ້ລະບຽບຫລັກການທາງດ້ານເຕັກນິກ-ວິຊາການ ກ່ຽວກັບການກວດກາ ແລະ ຄຸ້ມຄອງການຂຸດຄົ້ນ, ສຳຫລວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳຕົກຂ້ອນໃຫ້ເປັນລະບົບຄົບຊຸດ ເພື່ອເປັນບ່ອນອີງໃນການປະຕິບັດຕົວຈິງຢ່າງເປັນເອກະພາບ.

7. ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່, ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນເປັນຢ່າງດີ.

8. ຖ້າຫາກເນື້ອໃນໃດຂອງຄຳສັ່ງສະບັບນີ້ ຫາກຂັດກັບຄຳສັ່ງ ຫລື ຂໍ້ກຳນົດທີ່ອອກໃນເມື່ອກ່ອນ, ໃຫ້ຖືວ່າເນື້ອໃນຂອງຄຳສັ່ງສະບັບນີ້ ມີຜົນສັກສິດ. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ